**ມິຊຊາອາທິດທີ 31 ກຳນົດທຳມະດາ ປີ B**

**ວັນທີ 31 ຕຸລາ 2021**



**ພຣະວໍລະສານໂດຍນັກບຸນມັກໂກ 12, 28ຂ- 34**

ໃນເວລານັ້ນ, ນັກກົດໝາຍຜູ້ໜຶ່ງເຂົ້າມາທູນຖາມພຣະເຢຊູເຈົ້າວ່າ: "ພຣະບັນຍັດໃດເປັນເອກກ່ວາໝູ່?" ພຣະເຢຊູເຈົ້າຕອບວ່າ: "ອິສຣາແອນເອີຍຈົ່ງຟັງເຖີດ, ພຣະບັນຍັດອັນຕົ້ນຄື: ພຣະອົງພຣະເຈົ້າຂອງເຮົາທັງຫລາຍມີແຕ່ພຣະອົງເຈົ້າດຽວ. ເຈົ້າຈົ່ງຮັກພຣະອົງພຣະເຈົ້າຂອງເຈົ້າສຸດຈິດສຸດໃຈ, ສຸດວິນຍານ ແລະສຸດກຳລັງຂອງເຈົ້າ. ອັນທີສອງຄື: ຈົ່ງຮັກເພື່ອນມະນຸດ ຄືຮັກຕົວເຈົ້າເອງ. ບໍ່ມີພຣະບັນຍັດໃດໃຫຍ່ກວ່າພຣະບັນຍັດສອງປະການນີ້." ນັກກົດໝາຍທູນຕອບວ່າ: "ດີຫລາຍ, ພຣະອາຈານເອີຍ, ທ່ານວ່າ ພຣະເຈົ້າມີແຕ່ພຣະອົງດຽວແລະບໍ່ມີພະອື່ນນອກຈາກພຣະອົງນັ້ນ, ຖືກຕ້ອງແທ້. ຮັກພຣະອົງສຸດໃຈ, ສຸດສະຕິປັນຍາ, ສຸດເຫື່ອແຮງ, ແລະຮັກເພື່ອນມະນຸດ ຄືຮັກຕົວເອງນັ້ນປະເສີດເລີດກ່ວາເຄື່ອງບູຊາແລະສິນບູຊາໃດ." ພຣະເຢຊູເຈົ້າເຫັນວ່າເຂົາໃຫ້ຂໍ້ສັງເກດຢ່າງສະຫລຽວສະຫລາດດັ່ງນີ້ຈຶ່ງກ່າວວ່າ: "ເຈົ້າບໍ່ຢູ່ໄກອານາຈັກຂອງພຣະເຈົ້າດອກ". ແລ້ວບໍ່ມີໃຜຫານຖາມພຣະອົງເລີຍ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວັນນີ້ມີນັກກົດໝາຍຜູ້ໜຶ່ງເຂົ້າມາຖາມພຣະເຢຊູເຈົ້າກ່ຽວກັບບັນຍັດເອກແລະໃຫຍ່ກວ່າໝູ່ໃນບັນຍັດທັງຫລາຍ. ສິ່ງທີ່ນັກກົດໝາຍຜູ້ນີ້ກະທຳແຕກຕ່າງຕ່າງຈາກພວກຟາຣີເຊວທີ່ເຂົ້າມາຖາມພຣະເຢຊູເຈົ້າເພື່ອທົດທອບແລະຈັບຜິດພຣະອົງ. ສ່ວນນັກກົດໝາຍຜູ້ນີ້ເຂົ້າມາຖາມພຣະເຢຊູເຈົ້າເພື່ອຢາກຟັງວາຈາຂອງພຣະອົງ. ເໝືອນກັບວ່ານັກກົດໝາຍຜູ້ນີ້ກຳລັງປະຕິບັດພຣະບັນຍັດເອກອັນແມ່ນ "ຈົ່ງຟັງເຖີດອິສຣາແອນ". ນັກກົດໝາຍຜູ້ນີ້ອາດຍັງບໍ່ເຊື່ອວ່າພຣະເຢຊູເຈົ້າແມ່ນພຣະບຸດຂອງພຣະເຈົ້າແລະພຣະຜູ້ກູ້ໄຖ່ຂອງເຂົາ. ແຕ່ຢ່າງນ້ອຍເຂົາກໍຮັບຮູ້ວ່າ ພຣະເຢຊູເຈົ້າເປັນອາຈານຜູ້ທີ່ເທດສອນພຣະທຳບັນຍັດແລະພຣະອານາຈັກສະຫວັນ. ດ້ວຍເຫດນີ້, ໃນຕອນທ້າຍຂອງພຣະວໍລະສານ, ພຣະເຢຊູເຈົ້າຈຶ່ງກ່າວກັບເຂົາວ່າ: "ເຈົ້າບໍ່ຢູ່ໄກອານາຈັກຂອງພຣະເຈົ້າດອກ". ໝາຍວ່າຖ້າເຈົ້າຍອມຟັງແລະນຳມາປະຕິບັດສິ່ງທີ່ພຣະເຈົ້າບອກສອນໃນພຣະທຳບັນຍັດຂອງພຣະອົງນັ້ນ, ເຈົ້າກໍຈະໄດ້ເຂົ້າໃນອານາຈັກຂອງພຣະອົງ.

ທັດສະນະທ່າທີຂອງນັກກົດໝາຍຜູ້ນີ້ກໍເປັນຄຳຖາມສຳລັບພວກເຮົາແຕ່ລະຄົນເຊັ່ນດຽວກັນ. ເພາະພວກເຮົາກໍເປັນເໝືອນນັກກົດໝາຍຜູ້ນີ້. ຍ້ອນພວກເຮົາໄດ້ຮຽນຮູ້ພຣະທຳຄຳສອນຂອງພຣະກາຣິສຕະຈັກ. ພວກເຮົາໄດ້ອ່ານແລະຮູ້ຈັກວາຈາຂອງພຣະເຈົ້າ. ແຕ່ພວກເຮົາໄດ້ຍິນສຽງຂອງພຣະອົງທີ່ກ່າວກັບພວກເຮົາຜ່ານທາງວາຈາຂອງພຣະອົງບໍ? ຫລືພວກເຮົາມີຫູແຕ່ບໍ່ໄດ້ຍິນ. ພວກເຮົາໄດ້ໃຫ້ເມັດພືດແຫ່ງວາຈາຂອງພຣະອົງຢັ່ງຮາກເລິກລົງໃນໃຈພວກເຮົາບໍ? ຫລືຈິດໃຈພວກເຮົາເປັນເໝືອນດິນແຂງແລະພຸ່ມໜາມບໍ? ເພາະຖ້າພວກເຮົາບໍ່ຟັງສຽງຂອງພຣະເຈົ້າແລະບໍ່ເດີນຕາມເສັ້ນທາງແຫ່ງພຣະທຳບັນຍັດຂອງພຣະອົງ ພວກເຮົາກໍຈະບໍ່ຮູ້ຈັກພຣະອົງແລະບໍ່ເຊື່ອໃນພຣະອົງໄດ້. ຜົນທີ່ຕາມມາກໍຄື ພວກເຮົາກໍຈະບໍ່ໄດ້ເຂົ້າໃນອານາຈັກຂອງພຣະອົງດ້ວຍ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ມີຈິດໃຈສຸພາບແລະພ້ອມທີ່ຈະຮັບຟັງວາຈາຂອງພຣະອົງທີ່ປາກເວົ້າກັບລູກແຕ່ລະວັນຜ່ານທາງພຣະວໍລະສານ. ເພື່ອລູກຈະໄດ້ຮູ້ຈັກແລະຮັກພຣະອົງຫລາຍຂຶ້ນ. ເພື່ອວາຈາຂອງພຣະອົງຈະເປັນຄວາມຈິງແລະຫົນທາງນຳລູກໄປສູ່ອານາຈັກຂອງພຣະອົງດ້ວຍເທີ້ນ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ